ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ແຂວງວຽງຈັນ

ພະແນກ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ

ເລກທີ 941/ຖວທ.ວຈ

ລົງວັນທີ 9 ສິງຫາ 2022

# ຂໍ້ຕົກລົງ

## ວ່າດ້ວຍ: ການແຕ່ງຕັ້ງຄະນະບໍລິຫານງານ ເຄືອຂ່າຍພັດທະນາ, ສົ່ງເສີມ ແລະ ຄຸ້ມຄອງ ຈຸດໝາຍປາຍທາງການທ່ອງທ່ຽວ (DMN)ຂອງແຂວງວຽງຈັນ

- **ອີງຕາມ** ໜັງສືສັນຍາຊ່ວຍເຫລືອລ້າ ຂອງໂຄງການພັດທະນາໂຄງລ່າງພື້ນຖານ ເພື່ອສົ່ງເສີມການທ່ອງທ່ຽວ ໄລຍະ II ລະຫ່ວາງ ລັດຖະບານແຫ່ງ ສປປລາວ ແລະ ທະນາຄານພັດທະນາອາຊີ (ADB) ສະບັບເລກທີ 0599-LAO(SF) ລົງວັນທີ 16 ຕຸລາ 2018
- **ອີງຕາມ** ການຕົກລົງເຫັນດີເປັນເອກະພາບຂອງກອງປະຊຸມຜ່ານຮ່າງຂໍ້ຕົກລົງວ່າດ້ວຍການແຕ່ງຕັ້ງຄະນະບໍລິຫານງານ, ກອງເລຂາ ແລະ ສະມາຊິກເຄືອຂ່າຍພັດທະນາ, ສົ່ງເສີມ ແລະ ຄຸ້ມຄອງຈຸດຫມາຍປາຍທາງການທ່ອງທ່ຽວຂອງແຂວງວຽງຈັນ, ຄັ້ງວັນທີ 25/7/2022

### ຫົວໜ້າພະແນກ ຖວທ ແຂວງວຽງຈັນ ຕົກລົງ:

**ມາດຕາ 01:** ແຕ່ງຕັ້ງຄະນະບໍລິຫານງານເຄືອຂ່າຍພັດທະນາ, ສົ່ງເສີມ ແລະ ຄຸ້ມຄອງຈຸດໝາຍປາຍທາງການທ່ອງທ່ຽວຂອງແຂວງວຽງຈັນ ເຊິ່ງປະກອບມີບັນດາທ່ານດັ່ງນີ້:

**I. ຄະນະຊີ້ນໍາລວມ:**

1) ທ່ານ ນາງ ອິ່ນຄໍາ ພັນດາລາ ຫົວຫນ້າພະແນກ ຖວທ ແຂວງ — ເປັນຫົວຫນ້າ
2) ທ່ານ ແສງແກ້ວ ສູນທະວົງສາ ຮອງຫົວໜ້າພະແນກ ຖວທ ແຂວງ — ເປັນຮອງ
3) ທ່ານ ທຸມພັນ ພົມມະຈັກ ຜູ້ອໍານວຍການຮ້ານອາຫານນໍ້າງື່ມ — ເປັນຮອງ
4) ທ່ານ ສົງພັນ ມະນີວັນ ຜູ້ປະສານງານກັບຝ່າຍລັດຖະບານ ຂອງແດນສະຫວັນນໍ້າງື່ມຣີສອດ — ເປັນຄະນະ
5) ທ່ານ ອໍາພອນ ສີລາປະເສີດ ຫົວໜ້າກຸ່ມເຮືອນໍາທ່ຽວອ່າງນໍາ້ງື່ມ — ເປັນຄະນະ
6) ທ່ານ ນາງ ສົມເພັດ ໂຄດສີເມືອງ ຜູ້ອໍານວຍການຕໍາ່ຫູກບ້ານໂພນໝີ (ປ້າຄໍາແສນ) — ເປັນຄະນະ
7) ທ່ານ ຂັນທອງ ສີປະເສີດ ຜູ້ອໍານວຍການແຫຼ່ງທ່ອງທ່ຽວຍອດຊ່ວງແດນນິລະມິດ — ເປັນຄະນະ
8) ທ່ານ ນາງ ຕຸ່ມຄໍາ ວົງຄີລີ ຮອງຜູ້ອໍານວຍການສະຖານທີ່ທ່ອງທ່ຽວດວງວິໄລໜອງກອກ — ເປັນຄະນະ

**II. ສະມາຊິກເຄືອຂ່າຍ:**

1) ທ່ານ ປັນຍາສິດ ບູນສົງຄາມ ຫົວໜ້າຂະແໜງທ່ອງທ່ຽວ
2) ທ່ານ ຄໍາມີ ພຸດທະວົງ ຮອງຫົວຫນ້າຂະແໜງທ່ອງທ່ຽວ
3) ທ່ານ ນາງ ກິ່ງສີດາ ແກ້ວປະເສີດ ຮອງຂະແໜງວັດທະນະທໍາ
4) ທ່ານ ເທວະລິດ ພະຈອມພົນ ວິຊາການຂະແໜງທ່ອງທ່ຽວ
5) ທ່ານ ນາງ ໄກສອນ ວົງຈັນດີ ວິຊາການສູນຝຶກອົບຮົມການທ່ອງທ່ຽວ
6) ທ່ານ ບຸນລະພະໄຊ ລາຊາສົມບັດ ຜູ້ອໍານວຍການສະຖານທີ່ທ່ອງທ່ຽວສວນເສືອປ່າ
7) ທ່ານ ແສງທະວີໄຊ ໄວຍາເພດ ຜູ້ອໍານວຍການລ່ອງງື່ມວິວຣີສອດ

8) ທ່ານ ນາງ ພູອິ ພິມມະຈັນ ອໍານວຍການຫ້ອງປຸງແຕ່ງຢາພື້ນເມືອງລາວຫວ້ານລີສີຖູນຊັບ,ຫົວໜ້າກຸ່ມຄ້າສິນ ໂອດອບ ເມືອງວຽງຄໍາ

9) ທ່ານ ສົມໝາຍ ຈັນທະວິໄຊ, ກຸ່ມຫັດຖະກໍາບ້ານວັງມົນ, ເມືອງໂພນໂຮງ

10) ທ່ານ ນາງ ວອນ ມະນີວົງ ສະເຕີ້ນ, ຜູ້ອໍານວຍການເຮືອນພັກເມືອງເຟືອງເຮືອນລາວ

11) ທ່ານ ນາງ ທອງເດືອນ, ກຸ່ມຫັດຖະກໍາບ້ານໂພນຊອງ ເມືອງວຽງຄໍາ

**III. ກອງເລຂາເຄືອຂ່າຍ :**

1) ທ່ານ ແສງອາລຸນ ວິໄລເຮືອງ ຮອງຫົວໜ້າຂະແໜງທ່ອງທ່ຽວ ເປັນຫົວໜ້າ

2) ທ່ານ ສະໄໜວ ພິມມະໄກສອນ ວິຊາການຂະແໜງທ່ອງທ່ຽວ ເປັນຮອງ

3) ທ່ານ ຕັດສະລີ ມີລັດຕະນະແພງ ວິຊາການຂະແໜງທ່ອງທ່ຽວ ເປັນຄະນະ

4) ທ່ານ ນາງ ໄກສອນ ແກ້ວຈໍາປາ ວິຊາການຂະແໜງທ່ອງທ່ຽວ ເປັນຄະນະ

**ມາດຕາ 02:** ສິດ ແລະ ໜ້າທີ່

**I. ສິດ ແລະ ໜ້າທີ່ຂອງຄະນະຊີ້ນໍາລວມ**

1) ໃຫ້ທິດຊີ້ນໍາຕໍ່ການຈັດຕັ້ງປະຕິບັດ ແຜນກິດຈະກໍາຂອງເຄືອຂ່າຍພັດທະນາ, ສົ່ງເສີມ ແລະ ຄຸ້ມຄອງຈຸດໝາຍປາຍທາງການທ່ອງທ່ຽວຂອງແຂວງວຽງຈັນ ທີ່ຈະໄດ້ຈັດຂຶ້ນຢ່າງໜ້ອຍ 2 ຄັ້ງຕໍ່ປີ, ໂດຍການເປັນເຈົ້າການ ລະຫວ່າງ ພາກລັດ ແລະ ພາກທຸລະກິດຮ່ວມກັນຈັດຂຶ້ນ.

2) ເປັນໃຈກາງປະສານສົມທົບກັບຂະແໜງການກ່ຽວຂ້ອງໃນການນໍາເອົາບັນຫາທີ່ເປັນອຸປະສັກ ຕໍ່ການພັດທະນາ, ສົ່ງເສີມ ແລະ ຄຸ້ມຄອງຈຸດໝາຍປາຍທາງການທ່ອງທ່ຽວຂອງແຂວງວຽງຈັນ ເພື່ອນໍາສະເໜີລາຍງານຕໍ່ການນໍາແຂວງເພື່ອຮັບຊາບ ແລະ ມີທິດຊີ້ນໍາ.

**II. ສິດ ແລະ ໜ້າທີ່ຂອງສະມາຊິກເຄືອຂ່າຍ**

1) ເປັນໃຈກາງປະສານງານກັບພາກລັດ, ພາກທຸລະກິດ, ໂຄງການ, ອົງການຈັດຕັ້ງສາກົນ ແລະ ຂະແໜງການທີ່ກ່ຽວຂ້ອງພາຍໃນແຂວງວຽງຈັນ ແລະ ຕ່າງແຂວງ ເພື່ອຊຸກຍູ້ຕິດຕາມຄວາມຄືບໜ້າຂອງການຈັດຕັ້ງປະຕິບັດແຜນກິດຈະກໍາຂອງເຄືອຂ່າຍ ໃນແຕ່ລະໄລຍະ.

2) ເປັນເສນາທິການໃຫ້ແກ່ຄະນະຊີ້ນໍາລວມ ໃນການປຸກລະດົມຂົນຂວາຍ ພາກລັດ ແລະ ພາກທຸລະກິດ ເພື່ອເຂົ້າມາມີສ່ວນຮ່ວມ ແລະ ຂະຫຍາຍສະມາຊິກເຄືອຂ່າຍພັດທະນາ, ສົ່ງເສີມ ແລະ ຄຸ້ມຄອງຈຸດໝາຍປາຍທາງການທ່ອງທ່ຽວຂອງແຂວງວຽງຈັນ ໃຫ້ຫລາຍຂຶ້ນ.

**III. ສິດ ແລະ ໜ້າທີ່ຂອງກອງເລຂາ**

1) ເປັນເຈົ້າການ ໃນການສ້າງແຜນການເຄື່ອນໄຫວວຽກງານຂອງເຄືອຂ່າຍ, ແຜນງົບປະມານ ເປົ້າໝາຍຜູ້ເຂົ້າຮ່ວມ, ບົດບັນທຶກກອງປະຊຸມ, ບົດສະຫລຸບ-ລາຍງານ, ອຸປະກອນຮັບໃຊ້ ແລະ ແຈກຢາຍເອກະສານຕ່າງໆໃຫ້ແກ່ສະມາຊິກ ແລະ ອົງການຈັດຕັ້ງທີ່ກ່ຽວຂ້ອງ.

2) ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມການຊີ້ນໍາຂອງຄະນະຊີ້ນໍາລວມ ແລະ ຄະນະສະມາຊິກ ເພື່ອທົບທວນຄວາມຄືບໜ້າຂອງການຈັດຕັ້ງປະຕິບັດແຜນກິດຈະກໍາຂອງເຄືອຂ່າຍ ໃນແຕ່ລະໄລຍະ.

**ມາດຕາ 03:** ສໍາລັບງົບປະມານຮັບໃຊ້ ໃນການເຄື່ອນໄຫວວຽກງານ ແມ່ນນໍາໃຊ້ງົບປະມານ ຂອງໂຄງການພັດທະນາໂຄງລ່າງພື້ນຖານເພື່ອສົ່ງເສີມການທ່ອງທ່ຽວໄລຍະ 2 ເປັນຜູ້ສະໜັບສະໜູນ.

**ມາດຕາ 04:** ຂະແໜງການກ່ຽວຂ້ອງ, ບັນທ່ານທີ່ໄດ້ຮັບການແຕ່ງຕັ້ງຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດຕາມຂໍ້ຕົກລົງສະບັບນີ້ໃຫ້ມີປະສິດທິຜົນສູງ.

**ມາດຕາ 05:** ຂໍ້ຕົກລົງສະບັບນີ້ມີຜົນສັກສິດ ແລະ ນໍາໃຊ້ໄດ້ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ

**ຫົວໜ້າພະແນກ**

ພະແນກ ຖະແຫຼງຂ່າວ,ວັດທະນະທໍາ ແລະທ່ອງທ່ຽວ ແຂວງວຽງຈັນ

**ມ.ອິ່ນຄໍາ ພັນດາລາ**